ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1894 -ຜ-ຟຟລ.

ນະຄອນຫລວງວຽງຈັນ, ວັນທີ 13 MAY 2026

ນະໂຍບາຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ສະບັບປັບປຸງຄັ້ງທີ 3)

- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ສະບັບເລກທີ 53/ສພຊ, ລົງວັນທີ 28 ມິຖຸນາ 2024.
- ອີງຕາມ ຂໍ້ຕົກລົງຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ວ່າດ້ວຍການຄຸ້ມຄອງຄຸ້ມຄອງ ນະພາບນ້ຳ ແລະ ການປ່ອຍນ້ຳເປື້ອນ, ສະບັບເລກທີ 1430/ກຊສ, ລົງວັນທີ 7 ກໍລະກົດ 2023.
- ອີງຕາມ ສັນຍາສຳປະທານ (CA) ລະຫວ່າງ ຜ-ຟຟລ ກັບ ລັດຖະບານ.
- ອີງຕາມ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 463/ຕລຊລ, ລົງວັນທີ 03 ເມສາ 2023.
- ອີງຕາມ ມາດຕະຖານສະກົນລະບົບການຈັດການສິ່ງແວດລ້ອມ ແລະ ສັງຄົມ (Environmental And Social Management System: ESMS) ISO 14001.

1. ບົດນຳ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ເປັນບໍລິສັດທີ່ດຳເນີນທຸລະກິດດ້ານການຜະລິດພະລັງງານໄຟຟ້າ ເພື່ອສະໜອງໃຫ້ແກ່ລັດວິສາຫະກິດໄຟຟ້າລາວ, ເຊິ່ງມີເປົ້າໝາຍໃນການດຳເນີນທຸລະກິດແບບຍືນຍົງ ຕາມທິດທາງສີຂຽວ ຂອງລັດຖະບານ ເພື່ອການເຕີບໂຕໃນໄລຍະຍາວໂດຍຄຳນຶງເຖິງຄວາມສ່ຽງ, ໂອກາດທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ ທັງນີ້ ບໍລິສັດ ໄດ້ນຳລະບົບການຈັດການສິ່ງແວດລ້ອມ ແລະ ສັງຄົມ ມາເປັນແນວທາງໃນການດຳເນີນທຸລະ ກິດຂອງບໍລິສັດ ໃຫ້ມີຄວາມສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລະ ມາດຕະຖານສາກົນທາງດ້ານສິ່ງແວດລ້ອມ ລວມເຖິງນະໂຍບາຍການປ້ອງກັນຄວາມສ່ຽງທີ່ອາດຈະເກີດຂຶ້ນ.

ຜ-ຟຟລ ໃຫ້ຄວາມສຳຄັນຂອງການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຄວບຄູ່ ໄປກັບການຫຼຸດຜ່ອນຜົນກະທົບທາງລົບຕະຫຼອດ ເຖິງການພັດທະນາໂຄງການ, ການປະຕິບັດການ ແລະ ສ້ອມແປງບຳລຸງ ຮັກສາ ຕະຫຼອດຈົນການຮື້ຖອນໂຄງການ ລວມໄປເຖິງກິດຈະກຳທາງທຸລະກິດ ແລະ ວຽກງານການສະໜັບສະໜູນທີ່ ກ່ຽວຂ້ອງ ການຈັດຊື້ຈັດຈ້າງ ການຂົນສົ່ງ ແລະ ການຄຸ້ມຄອງ ຫຼື ການເຂົ້າຊື້ກິດຈະການ ແລະ ການດຳເນີນການດ້ານງານ ບໍລິຫານ ເຊິ່ງ ຜ-ຟຟລ ໄດ້ສ້າງນະໂຍບາຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມນີ້ ເພື່ອເປັນແນວທາງໃນການປະຕິບັດຕາມ ກົດ ແລະ ເປົ້າໝາຍໃນການດຳເນີນທຸລະກິດຂອງບໍລິສັດ.

2. ຈຸດປະສົງ

ນະໂຍບາຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແມ່ນເປັນການກຳນົດຫຼັກການ ແລະ ແນວທາງການຈັດຕັ້ງ ປະຕິບັດໃຫ້ແກ່ບໍລິສັດ, ເພື່ອສົ່ງເສີມການເຕີບໃຫຍ່ຂະຫຍາຍຕົວຂອງທຸລະກິດໃນໄລຍະສັ້ນ ແລະ ໄລຍະຍາວ ແລະ ການ ພັດທະນາພະລັງງານໄຟຟ້າຄວບຄູ່ໄປກັບການພັດທະນາອົງກອນ ໃຫ້ເປັນຜູ້ນຳດ້ານການອະນຸລັກພະລັງງານ ຄຽງຄູ່ ປົກ ປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ.

3. ຂອບເຂດ

ນະໂຍບາຍສະບັບນີ້ມີຜົນໃຊ້ກັບພະນັກງານທຸກຄົນ ຢູ່ສຳນັກງານໃຫຍ່, ບັນດາເຂື່ອນພາຍໃຕ້ການຄຸ້ມຄອງຂອງ ຜ-ຟຟລ, ບໍລິສັດລູກ ແລະ ບໍລິສັດໃນເຄືອ, ຕະຫຼອດເຖິງ ບັນດາຜູ້ຮັບເໝົາ ຂອງ ຜ-ຟຟລ.

4. ການກວດກາ ແລະ ຕິດຕາມ

ນະໂຍບາຍດ້ານສິ່ງແວດລ້ອມ ແລະ ສັງຄົມ ສະບັບນີ້ ໄດ້ຜ່ານການພິຈາລະນາໂດຍຄະນະກຳມະການຄຸ້ມຄອງບໍລິຫານ ແລະ ໄດ້ຮັບການອະນຸມັດຈາກສະພາບໍລິຫານ ຜ-ຟຟລ ໂດຍມີການຊີ້ນຳຈາກຄະນະຜູ້ອຳນວຍການ ໃນການກວດກາ ແລະ ຕິດຕາມການດຳເນີນງານ ໃຫ້ສອດຄ່ອງກັບນະໂຍບາຍສະບັບນີ້. ໂດຍມີພະແນກສິ່ງແວດລ້ອມ ຝ່າຍເລຂານຸການ ແລະ ຄຸ້ມຄອງບໍລິຫານເປັນຜູ້ກວດກາ, ຕິດຕາມ ແລະ ຄຸ້ມຄອງນະໂຍບາຍສະເພາະ.

5. ໜ້າທີ່ ແລະ ຄວາມຮັບຜິດຊອບ

ນະໂຍບາຍດັ່ງກ່າວ ກຳນົດໃຫ້ພະນັກງານທຸກຄົນຂອງບໍລິສັດທີ່ຢູ່ສຳນັກງານໃຫ່ຍ ແລະ ເຂື່ອນໄຟຟ້າ ລວມເຖິງ ບໍລິສັດໃນເຄືອຂອງ ຜ-ຟຟລ ມີໜ້າທີ່ນຳນະໂຍບາຍສະບັບນີ້ມາໃຊ້ໃນການປະຕິບັດວຽກງານ ແລະ ການບໍລິຫານຕາມຄວາມເໝາະສົມ ໂດຍໃຫ້ມີການແບ່ງຄວາມຮັບຜິດຊອບຕາມໜ້າວຽກທີ່ກ່ຽວຂ້ອງຢ່າງຊັດເຈນ, ໃຫ້ມີການຕິດຕາມ ແລະ ການລາຍງານຜົນການດຳເນີນວຽກງານດັ່ງກ່າວ ຕໍ່ຄະນະຜູ້ບໍລິຫານຢ່າງເປັນປະຈຳ ໂດຍມີ ຝ່າຍເລຂານຸການ ແລະ ຄຸ້ມຄອງບໍລິຫານ ເປັນຫຼັກໃນການຕິດຕາມ ແລະ ມີໜ້າທີ່ລາຍງານຜົນການດຳເນີນການຕໍ່ຄະນະກຳມະການ ຄຸ້ມຄອງບໍລິຫານ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຕາມຄວາມຈຳເປັນແຕ່ລະໄລຍະຢ່າງເປັນປະຈຳ.

6. ນະໂຍບາຍ

6.1 ດ້ານສິ່ງແວດລ້ອມ (Environment)

- ກຳນົດໃຫ້ທຸກພາກສ່ວນມີການປະຕິບັດຕາມລະບຽບກົດໝາຍ ແລະ ມາດຕະຖານດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ ໂດຍຍຶດເອົາຫຼັກການຂອງອົງກອນສາກົນເປັນມາດຕະຖານແນວທາງໃນການປະຕິບັດ;
- ກຳນົດໃຫ້ທຸກເຂື່ອນຂອງ ຜ-ຟຟລ ຕ້ອງມີລະບົບຈັດການດ້ານສິ່ງແວດລ້ອມຢ່າງເປັນປະຈຳ (ການວາງແຜນ, ການປະຕິບັດ, ການກວດສອບ ແລະ ການປັບປຸງ)
- ກຳນົດໃຫ້ມີການຄວບຄຸມຜົນກະທົບ ແລະ ປົກປ້ອງກັນການເກີດມົນລະພິດຮອບດ້ານ ຈາກການດຳເນີນທຸລະກິດຂອງ ຜ-ຟຟລ ເຊັ່ນ: ການຄຸ້ມຄອງການປ່ອຍນ້ຳເສຍ, ວິທີການກຳຈັດນ້ຳມັນ, ການຖິ້ມຂີ້ເຫຍື້ອ ແລະ ກຳຈັດຂອງເສຍອັນຕະລາຍ, ການຫຼຸດຜ່ອນການປ່ອຍ CO_2 ແລະ ການໃຊ້ພະລັງງານຢ່າງມີປະສິດທິພາບ;
- ກຳນົດໃຫ້ມີການຄຸ້ມຄອງຄຸນນະພາບນ້ຳໃຫ້ຢູ່ໃນລະດັບມາດຕະຖານ ແລະ ກຳຈັດຕະກອນ ທີ່ຢູ່ໃນອ່າງເກັບນ້ຳ, ຮັກສາການປ່ອຍນ້ຳຂອງເຂື່ອນໃຫ້ຢູ່ໃນລະດັບມາດຕະຖານ ແລະ ປົກປ້ອງລະບົບນິເວດກໍ່ຄືສັດນ້ຳ ແລະ ຊີວະນານາພັນ.
- ກຳນົດໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການສ້າງອົງກອນເປັນສີຂຽວ ໂດຍເນັ້ນໜັກການຫຼຸດຜ່ອນ Carbon footprint ໂດຍການປັບປຸງປະສິດຕິພາບຂອງພະລັງງານ, ໃຊ້ພະລັງງານທີ່ສະອາດ (Clean Energy), ຫັນເປັນດິຈິຕອລ, ຫຼຸດການໃຊ້ນ້ຳມັນ ໂດຍຫັນການນຳໃຊ້ລົດໄຟຟ້າ (EV) ຫຼື ຫຼຸດຜ່ອນການເດີນທາງທີ່ບໍ່ຈຳເປັນ, ຄຸ້ມຄອງອ່າງນ້ຳ, ການຄັດແຍກຂີ້ເຫຍື້ອ (Reuse/Recycle), ການປູກປ່າຮອບເຂື່ອນ ແລະ ອື່ນໆ;

- ສົ່ງເສີມໃຫ້ບໍລິສັດ ມີສ່ວນຮ່ວມໃນການຫຼຸດຜ່ອນພາລະໂລກຮ້ອນ ໂດຍການສະໜັບສະໜຸນ ແລະ ນຳໃຊ້ມາດຕະການຫຼຸດການຊເຮືອນແກ້ວຢ່າງເປັນຮູບປະທຳ ເຊັ່ນ ການປັບປຸງປະສິດທິພາບການໃຊ້ພະລັງງານເຂື່ອນໄຟຟ້າ, ການຫຼຸດການໃຊ້ນ້ຳມັນໃນການຂົນສົ່ງ, ການນຳໃຊ້ພະລັງງານສະອາດ ແລະ ການຈັດການອ່າງເກັບນ້ຳ (ເຊັ່ນ ການເນົ່າເປື່ອຍຂອງຊາກຕົ້ນໄມ້ໃນນ້ຳ).
- ບໍລິສັດຈະດຳເນີນມາດຕະການປັບຕົວຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ (Climate Change) ເຊັ່ນ ການຄຸ້ມຄອງນ້ຳໃນອ່າງໃຫ້ເໝາະສົມ, ການວາງແຜນຮັບມືໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ພ້ອມທັງຟື້ນຟູປ່າໄມ້ໃນເຂດອ່າງໂຕ່ງເພື່ອຊ່ວຍດູດຊຶມການກບອນ (Carbon). ພະນັກງານທຸກຄົນຈະຕ້ອງມີສ່ວນຮ່ວມ ໂດຍການນຳໃຊ້ພະລັງງານຢ່າງປະຢັດ, ຫຼຸດການໃຊ້ເຈ້ຍ, ປະຕິບັດວຽກແບບດີຈີຕອລ ແລະ ປະຕິບັດຕາມແນວທາງ ESG (Environmental, Social, and Governance) ຂອງບໍລິສັດ ຢ່າງເຄັ່ງຄັດ ເພື່ອໃຫ້ການດຳເນີນງານມີຄວາມຍືນຍົງ ແລະ ສ່ວນຮ່ວມໃນການຫຼຸດຜ່ອນຜົນກະທົບຕໍ່ໂລກຢ່າງແທ້ຈິງ.
- ກຳນົດໃຫ້ທຸກພາກສ່ວນໃນບໍລິສັດ ມີການບໍລິຫານໝຸນໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດຕິພາບ.

6.2 ດ້ານສັງຄົມ (Social)

- ກຳນົດໃຫ້ມີການສົ່ງເສີມໃນການພັດທະນາຊຸມຊົນໃນຂອບເຂດອ້ອມຂ້າງເຂື່ອນ ໃນການສ້າງອາຊີບ, ຝຶກອົບຮົມທັກສະອາຊີບໃຫ້ປະຊາຊົນ, ສະໜັບສະໜຸນທາງດ້ານສາທາລະນະສຸກ ແລະ ການສຶກສາ ລວມເຖິງການພັດທະນາພື້ນຖານໂຄງລ່າງທີ່ ບໍລິສັດໄດ້ມີພັນທະຕໍ່ລັດຖະບານຕາມສັນຍາສຳປະທານ;
- ການມີສ່ວນຮ່ວມກັບສັງຄົມ ຫຼື ຊຸມຊົນອ້ອມຂ້າງ ໂດຍຮັບຟັງຄຳຄິດເຫັນຂອງຊຸມຊົນ ແລະ ມີລະບົບຊ່ອງທາງໃຫ້ຊຸມຊົນສາມາດຮ້ອງທຸກ/ແຈ້ງບັນຫາເຖິງບໍລິສັດໄດ້, ຕ້ອງມີການເຜີຍແຜ່ອະທິບາຍຜົນກະທົບ ໃຫ້ຊຸມຊົນຮັບຮູ້ ແລະ ອອກຄວາມຄິດເຫັນກ່ອນ ຫຼື ລະຫວ່າງການຈະດຳເນີນໂຄງການໃດໜຶ່ງຂອງບໍລິສັດ;
- ກຳນົດໃຫ້ມີການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບຂອງພະນັກງານ ລວມໄປເຖິງຊຸມຊົນອ້ອມຂ້າງ ໂດຍຕ້ອງມີການຄວບຄຸມຄວາມປອດໄພ ຕາມມາດຕະຖານ, ການຝຶກຊ້ອມການອົບພະຍົບກໍລະນີເກີດເຫດສຸກເສີນ, ແລະ ບໍ່ມີເຫດການ ແລະ ອຸປະຕິເຫດເກີດຂຶ້ນ ໃນເວລາເຮັດວຽກ..
- ກຳນົດໃຫ້ມີການສ້າງກິດຈະກຳ ຢ່າງເປັນປະຈຳ ຮ່ວມກັບຊຸມຊົນ ຂອບເຂດເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ແລະ/ຫຼື ຂອບເຂດບ້ານທຸກຍາກ ແລະ ສະຖານທີ່ອື່ນໆ ຕາມຄວາມເໝາະສົມ ໂດຍສຸມໃສ່ການສ້າງຜົນປະໂຫຍດໃຫ້ແກ່ສັງຄົມ ເຊັ່ນ: ການສ້າງໂຄງການບໍລິຈາກເຄື່ອງ, ການສົ່ງເສີມການສຶກສາ ແລະ ກິດຈະກຳພັດທະນາຊຸມຊົນອື່ນໆ.
- ກຳນົດໃຫ້ ຜູ້ຮັບເໝົາ ຕ້ອງປະຕິບັດຕາມນະໂຍບາຍຂອງບໍລິສັດ ໂດຍຄຳນຶງເຖິງການປົກປ້ອງສິ່ງແວດລ້ອມ, ການຮັບຜິດຊອບຕໍ່ສັງຄົມ ແລະ ປະຕິບັດວຽກຢ່າງໂປ່ງໃສ ຖືກຕ້ອງຕາມກົດໝາຍ ແລະ ບໍ່ໃຊ້ແຮງງານແບບຜິດກົດໝາຍ.

7. ການເຜີຍແຜ່

ນະໂຍບາຍສະບັບນີ້ ມີການເຜີຍແຜ່ໃຫ້ທຸກຄົນໃນບໍລິສັດຮັບຊາບ ແລະ ໃຫ້ມີການຈັດຕັ້ງປະຕິບັດຢ່າງເປັນລະບົບ; ແລະ ເປີດເຜີຍໃຫ້ມວນຊົນຮັບຊາບ ພ້ອມໃຫ້ມີການລາຍງານການປະຕິບັດວຽກງານດັ່ງກ່າວໃນບົດລາຍງານການດຳເນີນທຸລະກິດຂອງ ຜ-ຟຟລ ເປັນແຕ່ລະໄລຍະ.

8. ການທົບທວນ

ນະໂຍບາຍສິ່ງແວດລ້ອມ ແລະ ສັງຄົມ ຈະມີການທົບທວນ ແລະ ປັບປຸງເປັນແຕ່ລະໄລຍະ ເພື່ອໃຫ້ແທດເໝາະກັບ ລະບຽບກົດໝາຍ ຂອງ ສປປລ, ສະພາບການດຳເນີນທຸລະກິດ ແລະ ມາດຕະຖານສາກົນ.

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈຸມຄຳ